ຕົວຢ່າງໜ້ານີ້ສຳລັບການອ້າງອີງເທົ່ານັ້ນ.

Employment Development Department
State of California

# ໜັງສືແຈ້ງຜົນການຕັດສິນ

ວັນທີສົ່ງຈົດໝາຍ: 00/00/0000
ສຳລັບຫ້ອງການໃຊ້ເທົ່ານັ້ນ: 000000000

ຊື່ຜູ້ຍື່ນຄຳຮ້ອງ
ທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ
ເມືອງ, ລັດ, ລະຫັດໄປສະນີ

Employment Development Department
ທີ່ຢູ່ເລກທີ່
ເມືອງ, ລັດ, ລະຫັດໄປສະນີ

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາສະເປນ | 1-800-326-8937 |
| ພາສາຈີນກວາງຕຸ້ງ | 1-800-547-3506 |
| ພາສາຈີນກາງ | 1-866-303-0706 |
| ພາສາຫວຽດ | 1-800-547-2058 |
| TTY (ບໍ່ມີສຽງ) | 1-800-815-9387 |

*********************************************************************************************************

You are not eligible to receive benefits as explained below:
ທ່ານບໍ່ມີສິດທີ່ຈະໄດ້ຮັບສິດປະໂຫຍດຕາມທີ່ອະທິບາຍໄວ້ຂ້າງລຸ່ມນີ້:

1. _Your request to receive payment on an invalid unemployment insurance (UI) claim using the Standard Base Period is denied. You requested to file a claim for benefits with a benefit year beginning 00/00/0000. The base period of your claim is 00/00/0000 to 00/00/0000. Unemployment Insurance benefit awards are computed on wages paid in the base period per section 1275(a) of the California UI Code. You do not have enough wages in the base period to establish a valid claim.

1. _ຄຳຮ້ອງຂໍຮັບເງິນຊ່ວຍເຫຼືອການຫວ່າງງານ (UI) ທີ່ບໍ່ຖືກຕ້ອງ ໂດຍໃຊ້ໄລຍະເວລາທີ່ໃຊ້ເປັນປີຖານມາດຕະຖານ ແມ່ນຖືກປະຕິເສດ. ທ່ານໄດ້ຂໍຍື່ນຄຳຮ້ອງເພື່ອຮັບເງິນຊ່ວຍເຫຼືອສຳລັບປີສິດປະໂຫຍດ ເລີ່ມຕັ້ງແຕ່ວັນທີ 00/00/0000. ໄລຍະເວລາທີ່ໃຊ້ເປັນປີຖານໃນການຮ້ອງຂໍຂອງທ່ານແມ່ນວັນທີ 00/00/0000 ເຖິງວັນທີ 00/00/0000. ເງິນຊ່ວຍເຫຼືອການຫວ່າງງານທີ່ໄດ້ຮັບອະນຸມັດແມ່ນຄິດໄລ່ຈາກຄ່າຈ້າງທີ່ຈ່າຍໃຫ້ໃນໄລຍະເວລາທີ່ໃຊ້ເປັນປີຖານ ຕາມມາດຕາ 1275(a) ປະມວນກົດໝາຍ UI ລັດ California. ທ່ານບໍ່ໄດ້ຮັບຄ່າຈ້າງຢ່າງພຽງພໍໃນໄລຍະເວລາທີ່ໃຊ້ເປັນປີຖານເພື່ອ ກຳນົດວ່າຄຳຮ້ອງຂໍຂອງທ່ານແມ່ນຖືກຕ້ອງ.

2. _Your request to receive payment on an unemployment insurance (UI) claim based on an Alternate Base Period is denied. You do not have enough wages in the Alternate Base Period to establish a valid claim. You requested to file a claim for benefits with a benefit year beginning 00/00/0000. Under the Alternate Base Period program the base period of your claim is 00/00/0000 to 00/00/0000. Unemployment insurance benefit awards are computed on wages paid in the base period per section 1275(b) of the California UI Code.

2. _ຄຳຮ້ອງຂໍຮັບເງິນຊ່ວຍເຫຼືອການຫວ່າງງານ (UI) ທີ່ບໍ່ຖືກຕ້ອງ ໂດຍໃຊ້ໄລຍະເວລາທີ່ໃຊ້ເປັນປີຖານສຳຮອງແມ່ນຖືກປະຕິເສດ. ທ່ານບໍ່ໄດ້ຮັບຄ່າຈ້າງຢ່າງພຽງພໍໃນໄລຍະເວລາທີ່ໃຊ້ເປັນປີຖານສຳຮອງເພື່ອກຳນົດວ່າຄຳຮ້ອງຂໍຂອງທ່ານແມ່ນຖືກຕ້ອງ. ທ່ານໄດ້ຂໍຍື່ນຄຳຮ້ອງເພື່ອຮັບເງິນຊ່ວຍເຫຼືອສຳລັບປີສິດປະໂຫຍດ ເລີ່ມຕັ້ງແຕ່ວັນທີ 00/00/0000. ພາຍໃຕ້ໂຄງການໄລຍະເວລາທີ່ໃຊ້ເປັນປີຖານສຳຮອງ ໄລຍະເວລາທີ່ໃຊ້ເປັນປີຖານຂອງທ່ານແມ່ນວັນທີ 00/00/0000 ເຖິງວັນທີ 00/00/0000. ເງິນຊ່ວຍເຫຼືອການຫວ່າງງານທີ່ໄດ້ຮັບອະນຸມັດແມ່ນຄິດໄລ່ຈາກຄ່າຈ້າງທີ່ຈ່າຍໃຫ້ໃນໄລຍະເວລາທີ່ໃຊ້ເປັນປີຖານ ຕາມມາດຕາ 1275(b) ປະມວນກົດໝາຍ UI ລັດ California (section 1275(b) of the California UI Code).

3. _Your request to use base period wages from a prior claim to establish a current unemployment insurance (UI) claim is denied. Wages used in establishing a claim in any benefit year cannot be used to establish a claim in the next benefit year per section 1275 of the California UI Code. The effective date of your new claim is 00/00/0000. The base period of your claim is 00/00/0000 to 00/00/0000. Only wages paid during the base period may be used to establish a claim.

3. _ຄຳຮ້ອງຂໍຂອງທ່ານທີ່ຈະໃຊ້ຄ່າຈ້າງໃນໄລຍະເວລາທີ່ໃຊ້ເປັນປີຖານຈາກການຮ້ອງຂໍກ່ອນໜ້ານີ້ ເພື່ອກຳນົດການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານໃນປັດຈຸບັນແມ່ນຖືກປະຕິເສດ. ຄ່າຈ້າງທີ່ໃຊ້ໃນການກຳນົດການຮ້ອງຂໍໃນປີສິດປະໂຫຍດໃດໜຶ່ງບໍ່ສາມາດໃຊ້ເພື່ອກຳນົດການຮ້ອງຂໍໃນປີສິດປະໂຫຍດຕໍ່ໄປ ຕາມມາດຕາ 1275 ປະມວນກົດໝາຍ UI ລັດ California. ວັນທີທີ່ມີຜົນບັງຄັບໃຊ້ສຳລັບການຮ້ອງຂໍໃໝ່ຂອງທ່ານແມ່ນວັນທີ 00/00/0000. ໄລຍະເວລາທີ່ໃຊ້ເປັນປີຖານໃນການຮ້ອງຂໍຂອງທ່ານແມ່ນວັນທີ 00/00/0000 ເຖິງວັນທີ 00/00/0000. ສະເພາະຄ່າຈ້າງທີ່ໄດ້ຮັບໃນໄລຍະເວລາທີ່ໃຊ້ເປັນປີຖານເທົ່ານັ້ນທີ່ສາມາດນຳໃຊ້ເພື່ອກຳນົດການຮ້ອງຂໍເງິນຊ່ວຍເຫຼືອ.

4. _Your request to re-open your claim that ended on 00/00/0000 is denied. The benefit year of an unemployment insurance (UI) claim begins on the Sunday in the week you filed your claim. The claim ends 52 weeks later per section 1276 of the California UI Code. Payments cannot be made for weeks beyond the end date of the claim.

4. _ຄຳຮ້ອງຂໍຂອງທ່ານໃຫ້ເປີດການຮ້ອງຂໍໃໝ່ທີ່ສິ້ນສຸດໃນວັນທີ 00/00/0000 ແມ່ນຖືກປະຕິເສດ. ປີສິດປະໂຫຍດໃນການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ (UI) ເລີ່ມຕົ້ນໃນວັນອາທິດຂອງອາທິດທີ່ທ່ານຍື່ນຄຳຮ້ອງຂໍຂອງທ່ານ. ການຮ້ອງຂໍສິ້ນສຸດລົງໃນ 52 ອາທິດຕໍ່ມາ ຕາມມາດຕາ 1276 ປະມວນກົດໝາຍ UI ລັດ California. ບໍ່ສາມາດຈ່າຍເງິນໃຫ້ໄດ້ສຳລັບຫຼາຍອາທິດພາຍຫຼັງວັນທີການຮ້ອງຂໍເງິນຊ່ວຍເຫຼືອສິ້ນສຸດລົງ

5. _Your request to continue payments on your claim that ended on 00/00/0000 is denied. The benefit year of an unemployment insurance (UI) claim begins on the Sunday in the week you filed your claim. The claim ends 52 weeks later per section 1276 of the California UI Code. Payments cannot be made for weeks beyond the end date of the claim.

5. _ຄຳຮ້ອງຂໍຂອງທ່ານໃຫ້ສືບຕໍ່ຈ່າຍເງິນໃຫ້ທ່ານສຳລັບການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານທີ່ສິ້ນສຸດໃນວັນທີ 00/00/0000 ແມ່ນຖືກປະຕິເສດ. ປີສິດປະໂຫຍດໃນການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ (UI) ເລີ່ມຕົ້ນໃນວັນອາທິດຂອງອາທິດທີ່ທ່ານຍື່ນຄຳຮ້ອງຂໍຂອງທ່ານ. ການຮ້ອງຂໍສິ້ນສຸດລົງໃນ 52 ອາທິດຕໍ່ມາ ຕາມມາດຕາ 1276 ປະມວນກົດໝາຍ UI ລັດ California. ບໍ່ສາມາດຈ່າຍເງິນໃຫ້ໄດ້ສຳລັບຫຼາຍອາທິດພາຍຫຼັງວັນທີການຮ້ອງຂໍເງິນຊ່ວຍເຫຼືອສິ້ນສຸດລົງ

6. _Your request to continue payments on your exhausted unemployment insurance (UI) claim is denied. When you filed your claim effective 00/00/0000 you were entitled to a maximum benefit award of $000 at $000 per week for XX weeks. The payment for the week ending 00/00/0000 exhausted your claim. The benefits payable in any one benefit year shall not exceed the maximum benefit amount per section 1281(b1) of the California UI Code. Therefore, payments cannot be made after a claim balance has been exhausted.

6. _ຄຳຮ້ອງຂໍຂອງທ່ານໃຫ້ສືບຕໍ່ຈ່າຍເງິນໃຫ້ທ່ານສຳລັບການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ (UI) ທີ່ໝົດລົງແລ້ວແມ່ນຖືກປະຕິເສດ. ເມື່ອທ່ານຍື່ນຄຳຮ້ອງຂອງທ່ານທີ່ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 00/00/0000 ທ່ານມີສິດທີ່ຈະໄດ້ຮັບການອະນຸມັດສິດປະໂຫຍດສູງສຸດຈຳນວນ $000 ເປັນຈຳນວນ $000 ຕໍ່ອາທິດ ເປັນເວລາ XX ອາທິດ. ການຈ່າຍເງິນສຳລັບອາທິດທີ່ສິ້ນສຸດລົງໃນວັນທີ 00/00/0000 ເຮັດໃຫ້ເງິນຊ່ວຍເຫຼືອຂອງທ່ານໝົດລົງ. ສິດປະໂຫຍດທີ່ຈ່າຍໃນປີສິດປະໂຫຍດໃດໆຈະຕ້ອງບໍ່ເກີນຈຳນວນສິດປະໂຫຍດສູງສຸດ ຕາມມາດຕາ 1281(b1) ປະມວນກົດໝາຍ UI ລັດ California. ດັ່ງນັ້ນ ບໍ່ສາມາດຈ່າຍເງິນໃຫ້ໄດ້ຫຼັງຈາກທີ່ເງິນຍອດເງິນຄົງເຫຼືອຂອງເງິນຊ່ວຍເຫຼືອໝົດລົງແລ້ວ.

7. _You have established a valid claim for unemployment insurance (UI) benefits with a benefit year beginning 00/00/0000. Section 1276 of the California UI Code provides that a benefit year is a 52 week period. The benefit year of your claim does not end until 00/00/0000.

7. _ທ່ານໄດ້ເຮັດຄຳຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ (UI) ສຳລັບປີສິດປະໂຫຍດເລີ່ມຕັ້ງແຕ່ວັນທີ 00/00/0000. ມາດຕາ 1276 ປະມວນກົດໝາຍ UI ລັດ California ບັນຍັດວ່າປີສິດປະໂຫຍດໜຶ່ງແມ່ນໄລຍະເວລາ 52 ອາທິດ. ປີສິດປະໂຫຍດຂອງທ່ານບໍ່ສິ້ນສຸດລົງຈົນກວ່າຈະຮອດວັນທີ 00/00/0000.

8. _Your request for interest payments on your retroactive unemployment insurance (UI) benefits is denied. There is no provision in the law to allow the Department to pay interest on benefits.

8. _ຄຳຮ້ອງຂໍຂອງທ່ານໃຫ້ຈ່າຍຊຳລະດອກເບ້ຍໃຫ້ທ່ານສຳລັບເງິນເງິນຊ່ວຍເຫຼືອການຫວ່າງງານ (UI) ຍ້ອນຫຼັງແມ່ນຖືກປະຕິເສດ. ບໍ່ມີບົດບັນຍັດໃນກົດໝາຍທີ່ອະນຸຍາດໃຫ້ທາງພະແນກຈ່າຍຊຳລະດອກເບ້ຍຈາກເງິນຊ່ວຍເຫຼືອການຫວ່າງງານ.

9. _You reported that your last employer was XXXX. After considering the available information, the Department finds that you were not an "employee," per section 621B of the California Unemployment Insurance Code.

9. _ທ່ານໄດ້ລາຍງານວ່ານາຍຈ້າງລາຍສຸດທ້າຍຂອງທ່ານແມ່ນ XXXX. ຫຼັງຈາກພິຈາລະນາຂໍ້ມູນທີ່ມີຢູ່ ທາງພະແນກພົບວ່າທ່ານບໍ່ໄດ້ເປັນ "ລູກຈ້າງ" ຕາມມາດຕາ 621B ປະມວນກົດໝາຍປະກັນການຫວ່າງງານ ລັດ California.

10. _You reported that you were employed as an independent contractor, not as an employee with XXXX. After considering the available information, the Department finds that you were an "employee" per section 621B of the California Unemployment Insurance Code.

10. _ທ່ານໄດ້ລາຍງານວ່າທ່ານໄດ້ຮັບການຈ້າງງານເປັນຜູ້ຮັບເໝົາອິດສະຫຼະ ບໍ່ແມ່ນລູກຈ້າງຂອງ XXXX. ຫຼັງຈາກພິຈາລະນາຂໍ້ມູນທີ່ມີຢູ່ ທາງພະແນກພົບວ່າທ່ານ ເປັນ "ລູກຈ້າງ" ຕາມມາດຕາ 621B ປະມວນກົດໝາຍປະກັນການຫວ່າງງານ ລັດ California.

11. _Your request to file an unemployment insurance (UI) claim beginning 00/00/0000 based on an Alternate Base Period is denied because you qualify to file a Standard Base Period claim. Pursuant to section 1275(b) of the California UI Code, the Alternate Base Period can only be used to file a UI claim when there are not enough wages earned in the Standard Base Period to file a monetarily valid UI claim.

11. _ຄຳຂໍຍື່ນຄຳຮ້ອງຂອງທ່ານເພື່ອຮັບເງິນຊ່ວຍເຫຼືອການຫວ່າງງານ (UI) ເລີ່ມຕັ້ງແຕ່ວັນທີ 00/00/0000 ອີງຕາມໄລຍະເວລາທີ່ໃຊ້ເປັນປີຖານສຳຮອງ ແມ່ນຖືກປະຕິເສດເພາະວ່າທ່ານມີສິດຍື່ນຂໍຮັບເງິນຊ່ວຍເຫຼືອໂດຍໃຊ້ ໄລຍະເວລາທີ່ໃຊ້ເປັນປີຖານມາດຕະຖານ. ຕາມມາດຕາ 1275(b) ປະມວນກົດໝາຍ UI ລັດ Code ສາມາດໃຊ້ໄລຍະເວລາທີ່ໃຊ້ເປັນປີຖານສຳຮອງເພື່ອຍື່ນຂໍເງິນຊ່ວຍເຫຼືອການຫວ່າງງານ ສະເພາະເມື່ອຄ່າຈ້າງທີ່ໄດ້ຮັບໃນໄລຍະເວລາທີ່ໃຊ້ເປັນປີຖານມາດຕະຖານບໍ່ພຽງພໍສຳລັບການຍື່ນຂໍຄວາມ ຊ່ວຍເຫຼືອການຫວ່າງງານເປັນເງິນທີ່ຖືກຕ້ອງໄດ້ເທົ່ານັ້ນ.

12. _Your request to file an unemployment insurance (UI) claim based on the Alternate Base Period (ABP) effective 00/00/0000 is denied. Pursuant to section 1275(b) of the California UI Code, the first date an ABP claim can be filed is 04/01/12.

12. _ຄຳຂໍຍື່ນຄຳຮ້ອງຂອງທ່ານເພື່ອຮັບເງິນຊ່ວຍເຫຼືອການຫວ່າງງານ (UI) ອີງຕາມໄລຍະເວລາທີ່ໃຊ້ເປັນປີຖານສຳຮອງ (Alternate Base Period ຫຼື ABP) ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 00/00/0000 ແມ່ນຖືກປະຕິເສດ. ຕາມມາດຕາ 1275(b) ປະມວນກົດໝາຍ UI ລັດ California, ວັນທີທຳອິດທີ່ສາມາດຍື່ນຄຳຮ້ອງ ABP ແມ່ນວັນທີ 04/01/12.

****************************************************************************************************************

APPEAL INFORMATION
ຂໍ້ມູນການຂໍອຸທອນ

If you believe that this decision is not correct, you may file an appeal to the field office shown at the top of this form. In your appeal letter, explain why you do not agree with this decision. Any appeal from this notice, to be timely, must be filed on or before 00/00/0000.

ຖ້າທ່ານເຊື່ອວ່າຄຳຕັດສິນນີ້ບໍ່ຖືກຕ້ອງ ທ່ານສາມາດຍື່ນອຸທອນຕໍ່ຫ້ອງການສຳນັກງານປະຈຳພາກ ທີ່ສະແດງຢູ່ຂ້າງເທິງຂອງແບບຟອມນີ້. ໃນຈົດໝາຍອຸທອນຂອງທ່ານ ກະລຸນາອະທິບາຍເຫດຜົນທີ່ທ່ານບໍ່ເຫັນດີກັບຄຳຕັດສິນນີ້. ການອຸທອນໃດໆຕໍ່ໜັງສືແຈ້ງການສະບັບນີ້ຕ້ອງເຮັດໃຫ້ທັນກຳນົດເວລາ ຕ້ອງຍື່ນໃນວັນທີຫຼືກ່ອນວັນທີ 00/00/0000.

Important:
While an appeal is pending, you must continue to submit claim forms for each week you wish to be paid. If the final decision holds you eligible, you will only be paid for those weeks for which you have filed claim forms and have met all eligibility requirements.

ສິ່ງສຳຄັນ:
ໃນຂະນະທີ່ການອຸທອນຍັງຄ້າງຄາຢູ່ ທ່ານຕ້ອງສືບຕໍ່ສົ່ງແບບຟອມຮ້ອງຂໍເງິນຊ່ວຍເຫຼືອສຳລັບແຕ່ລະອາທິດຖ້າທ່ານຕ້ອງການທີ່ຈະໄດ້ຮັບເງິນ. ຖ້າຄຳຕັດສິນທີ່ເປັນທີ່ສິ້ນສຸດຕັດສິນວ່າທ່ານມີສິດໄດ້ຮັບຄວາມຊ່ວຍເຫຼືອ ທ່ານຈະໄດ້ຮັບເງິນສະເພາະອາທິດທີ່ທ່ານໄດ້ຍື່ນໃນແບບຟອມ ແລະໄດ້ປະຕິບັດຕາມຂໍ້ກຳນົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອ.